STAY SAFE MN

# ວັກຊີນໂຄວິດ-19 ຖືກຜະລິດຂຶ້ນແນວໃດ

12/16/2020

ວັກຊີນໂຄວິດ-19 ໄດ້ຖືກຄົ້ນພົບທຳອິດພາຍໃນໜຶ່ງປີຫລັງຈາກມີການລະບາດຂອງໄວຣັສ ໂຄວິດ-19. ມີຫຼາຍຄຳຖາມກ່ຽວກັບວ່າເປັນຫຍັງວັກຊີນຄືສ້າງຂຶ້ນໄວແທ້. ດ້ວຍການຊ່ວຍເຫຼືອຈາກຣັຖບານກາງ, ຂະບວນການສາມາດເກີດຂຶ້ນໄດ້ໄວກວ່າ ແລະ ມີປະສິດທິພາບຫຼາຍກວ່າ. ສິ່ງສຳຄັນແມ່ນຮູ້ຈັກວ່າ ຂັ້ນຕອນໃນການກວດຫາຄວາມປອດໄພແມ່ນບໍ່ໄດ້ຖືກມອງຂ້າມ. ໄລຍະເວລາເຫຼົ່ານີ້ສະແດງໃຫ້ເຫັນວ່າຂັ້ນຕອນການຜະລິດວັກຊີນໂຄວິດ-19 ແມ່ນມີປະສິດທິພາບຫຼາຍກວ່າເມື່ອທຽບກັບການຜະລິດວັກຊີນອື່ນໆ.

## ວິທີການຜະລິດວັກຊີນແມ່ນແນວໃດ

ຂັ້ນຕອນໃນການຜະລິດວັກຊີນແມ່ນໃຊ້ເວລາເຖິງ 10 ປີ.

- ຫຼັງຈາກການຄົ້ນຄ້ວາວິໄຈສຳເລັດແລ້ວ, ວັກຊີນໄດ້ຖືກສຶກສາທາງດ້ານການແພດກັບມະນຸດສາມຄັ້ງ; ແຕ່ລະຄັ້ງແມ່ນມີປະຊາຊົນເພີ່ມຂຶ້ນ.
- ອົງການອາຫານ ແລະ ຢາ (FDA) ອະນຸມັດວັກຊີນພາຍຫຼັງທີ່ກຸ່ມທີ່ປຶກສາດ້ານວິທະຍາສາດຂອງພວກເຂົາທົບທວນຜົນການສຶກສາ.
- ຈາກນັ້ນກຸ່ມທີ່ປຶກສາແຫ່ງຊາດ, ຄະນະກຳມະການທີ່ປຶກສາກ່ຽວກັບ ການປະຕິບັດການສັກຢາກັນພະຍາດ (ACIP) ທີ່ສູນຄວບຄຸມ ແລະ ປ້ອງກັນພະຍາດ (CDC), ແນະນຳໃຫ້ໃຊ້ໃນຜູ້ທີ່ຄວນໄດ້ຮັບວັກຊີນ.
- ຫຼັງຈາກນັ້ນ, ຜູ້ຜະລິດກໍ່ເລີ່ມຜະລິດວັກຊີນ.
- ໃນຂະນະທີ່ຄົນໄດ້ຮັບວັກຊີນ, CDC ແລະ FDA ສືບຕໍ່ຕິດຕາມເບິ່ງຂໍ້ມູນດ້ານຄວາມປອດໄພຂອງວັກຊີນ.



# ວັກຊີນໂຄວິດ-19 ແມ່ນເລີ່ມຕົ້ນຜະລິດແນວໃດ

- ການຄົ້ນຄວ້າວິໄຈກ່ອນໜ້ານີ້ແມ່ນສຶກສາກ່ຽວກັບໂຄໂລນາໄວຣັສ ແລະ ໄດ້ສຶກສາລ່ວງໜ້າກ່ຽວກັບເຕັກໂນໂລຊີຂອງວັກຊີນ ນັ້ນແມ່ນຈຸດລິເລີ່ມໃຫ້ຂະບວນການນີ້ເກີດຂຶ້ນ.
- ບາງຄັ້ງ ການຊອກຫາງົບປະມານໃນການສຶກສາວັກຊີນແມ່ນໃຊ້ເວລາຫຼາຍ, ແຕ່ສຳລັບວັກຊີນໂຄວິດ-19, ຣັຖບານກາງໄດ້ສະໜອງເງິນເປັນຈຳນວນຫຼາຍ.
- ຜູ້ຜະລິດໄດ້ວ່າຈ້າງ ຜູ້ເຂົ້າຮ່ວມທັງສາມໄລຍະຂອງການສຶກສາທາງການແພດໃນເວລາດຽວກັນ, ແທນການລໍຖ້າໃຫ້ແຕ່ລະໄລຍະສຳເລັດກ່ອນ.
- ຜູ້ຜະລິດຍັງຄົງຜະລິດວັກຊີນໃນຂະນະທີ່ການສຶກສາທາງການແພດຍັງດຳເນີນການຢູ່.
- ການອະນຸມັດໃຫ້ນຳໃຊ້ວັກຊີນໃນການອະນຸຍາດນຳໃຊ້ສຸກເສີນ (EUA) ແມ່ນຍັງໃຊ້ເວລາໜ້ອຍຢູ່. ການໄດ້ຮັບວັກຊີນທີ່ປອດໄພ ແລະໄດ້ຮັບຜົນ ແມ່ນຄວາມຮີບດ່ວນອັນດັບໜຶ່ງ.
  - ທີມງານຕ່າງໆໃນລະດັບຣັຖບານກາງແມ່ນບໍ່ປ່ອຍໃຫ້ພວກມັນຊັກຊ້າຈາກການທົບທວນ ແລະ ຫວັງວ່າ ຈະອະນຸມັດໃຫ້ໄດ້ໃຊ້ວັກຊີນ. ຕົວຢ່າງ, FDA ໄດ້ເພີ່ມພະນັກງານຫຼາຍຄົນ ເພື່ອເຮັດໃຫ້ຂັ້ນຕອນການ ທົບທວນສັ້ນລົງຈາກຫຼາຍເດືອນໄປເປັນຫຼາຍອາທິດ.
- ວັກຊີນຈະໄດ້ຮັບການຍອມຮັບຖ້າການສຶກສາສະແດງໃຫ້ເຫັນວ່າວັກຊີນແມ່ນມີຄວາມປອດໄພ ແລະ ໄດ້ຮັບຜົນເທົ່ານັ້ນ.




ຍັງມີຫຼາຍສິ່ງທີ່ພວກເຮົາຕ້ອງຮຽນຮູ້ກ່ຽວກັບຢາວັກຊີນໂຄວິດ-19, ເຊັ່ນວ່າ ການປ້ອງກັນຂອງວັກຊີນ ຈະໄດ້ດົນປານໃດ ແລະ ມັນຈະເຮັດມີປະສິດທິພາບໃນປະຊາຊົນທົ່ວໄປໄດ້ດີຊໍ່າໃດ, ແຕ່ວ່ານີ້ບໍ່ແມ່ນເຫດຜົນທີ່ຈະເຮັດໃຫ້ຄົນມີຄວາມຊັກຊ້າໃນການໄດ້ຮັບວັກຊີນໂຄວິດ-19 ທີ່ມີຄວາມປອດໄພ ແລະ ມີປະສິດທິຜົນ.

ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງ [ວັກຊີນໂຄວິດ-19 (www.health.state.mn.us/diseases/coronavirus/vaccine.html)](www.health.state.mn.us/diseases/coronavirus/vaccine.html).

MINNESOTA

ພະແນກສາທາລັດມິນນີໂຊຕ້າ (Minnesota Department of Health) | health.mn.gov | 651-201-5000
625 Robert Street North PO Box 64975, St. Paul, MN 55164-0975

ຕິດຕໍ່health.communications@state.mn.us ເພື່ອຂໍໃນຮູບແບບອື່ນ. (Lao)